| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| **ຊື່ໃບອະນຸຍາດ** | ໃບອະນຸຍາດເຮັດວຽກ ແລະ ການຂໍຂຶ້ນທະບຽນແຮງງານຕ່າງປະເທດ | |
| **ປະເພດຂອງໃບອະນຸຍາດ** | ໃບອະນຸຍາດ | |
| **ເລກລະຫັດໃບອະນຸຍາດ** | **ວັນທີ** | **ໜ່ວຍງານຮັບຜິດຊອບ** |
| MoLSW-SDED-7 | 09.01.2018 | ກົມພັດທະນາສີມືແຮງງານ ແລະ ຈັດຫາງານ |

| ຂໍ້ມູນພື້ນຖານ | |
|---|---|
| **ຮູບແບບການສົ່ງຄໍາຮ້ອງ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| **ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ** | ທຸກພາກສ່ວນ |
| **ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ** | ເພື່ອຄຸ້ມຄອງ ແລະ ຄວບຄຸມຄວາມສ່ຽງໃນການລັກລອບເຂົ້າເມືອງຂອງແຮງງານຕ່າງປະເທດ ແລະ ຮັບປະກັນວ່າ ຈະບໍ່ມີຄວາມສ່ຽງຈາກການເຮັດວຽກໂດຍບໍ່ຖືກຕ້ອງຕາມກົດໝາຍຂອງ ຄົນຕ່າງປະເທດ. ນອກຈາກນີ້, ການຂຶ້ນທະບຽນຈະໃຫ້ຄວາມຈະແຈ້ງວ່າແມ່ນ ໜ່ວຍງານແຮງງານໃດ ເປັນຜູ້ຮັບຜິດຊອບ ເປັນຕົ້ນສັງກັດໃນການເຮັດວຽກຂອງ ແຮງງານຕ່າງປະເທດ ແຕ່ລະຄົນ |
| **ຜູ້ທີ່ຕ້ອງຂໍໃບອະນຸຍາດ** | ຫົວໜ່ວຍແຮງງານ ທີ່ໄດ້ຮັບອະນຸຍາດນໍາເຂົ້າແຮງງານຕ່າງປະເທດ ແລະ ຕ້ອງການນໍາໃຊ້ແຮງງານຕ່າງປະເທດດັ່ງກ່າວ |
| **ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່?** | ບໍ່ມີ |
| **ທີ່ຢູ່ຂອງຂໍ້ມູນອອນລາຍ** | |
| **ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່?** | ແມ່ນແລ້ວ |
| **ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ** | 1. ຖ້າຈະນໍາໃຊ້ຜູ້ອອກແຮງງານຢູ່ແຂວງ ໃຫ້ຜ່ານແຜນການນໍາໃຊ້ຜູ້ອອກແຮງງານຕ່າງປະເທດ ຢູ່ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ທີ່ກ່ຽວຂ້ອງ 2. ຜູ້ໃຊ້ແຮງງານ ນໍາໃຊ້ແຮງງານຕ່າງປະເທດ ເກີນກໍານົດເວລາທີ່ອະນຸຍາດ ຖືກປັບໃໝ ເທົ່າກັບ 5 ໂດລາສະຫະລັດ ຕໍ່ຄົນຕໍ່ວັນຂອງຈໍານວນມື້ທີ່ເກີນ 3. ຜູ້ໃຊ້ແຮງງານ ນໍາໃຊ້ແຮງງານຕ່າງປະເທດ ບໍ່ຖືກສະຖານທີ່ເຮັດວຽກ ທີ່ກໍານົດໄວ້ໃນ ໃບອະນຸຍາດເຮັດວຽກ ຈະຖືກປັບໃໝ ເປັນເງິນກີບ ເທົ່າກັບ 200 ໂດລາສະຫະລັດ ຕໍ່ຄົນ ຕໍ່ຄັ້ງ 4. ສໍາລັບ ແຮງງານຕ່າງປະເທດ ທີ່ລັກເຮັດວຽກ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝເປັນເງິນກີບ ເທົ່າກັບ 100 ໂດລາສະຫະລັດ ຕໍ່ຄົນ ຕໍ່ຄັ້ງ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ** | 14 | |
| **ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ** | 1. ແຮງງານຕ່າງປະເທດ ຕ້ອງມີເງື່ອນໄຂ ຄື: (i) ເປັນແຮງງານທີ່ມີສີມື, ມີລະດັບວິຊາສະເພາະທີ່ສອດຄ່ອງກັບ ຕໍາແໜ່ງງານທີ່ຕ້ອງການ; (ii) ມີອາຍຸແຕ່ 20 ປີຂຶ້ນໄປ; (iii) ຕ້ອງຖ່າຍທອດຄວາມຮູ້ດ້ານວິຊາການ-ເຕັກນິກ ໃຫ້ແຮງງານລາວ; (iv) ມີສຸຂະພາບສົມບູນ ບໍ່ເປັນພະຍາດຕິດແຫດ 2. ຕ້ອງຜ່ານລາຍຊື່ແຮງງານຕ່າງປະເທດ ນໍາກົມຕໍາຫລວດກວດຄົນເຂົ້າເມືອງ, ກະຊວງປ້ອງກັນຄວາມສະຫງົບ 3. ຕ້ອງຜ່ານກະຊວງການຕ່າງປະເທດ ເພື່ອຂໍວິຊາແຮງງານ ແລະ ພາຍຫລັງແຮງງານຕ່າງປະເທດ ເຂົ້າມາ ສປປ ລາວ ແລ້ວໃຫ້ຂໍວິຊາເຂົ້າ-ອອກຫລາຍເທື່ອ ນໍາກົມກົງສຸນ, ກະຊວງການຕ່າງປະເທດ 4. ຫົວໜ່ວຍແຮງງານຕ້ອງແຈ້ງບັນຊີລາຍຊື່, ຈໍານວນ ແຮງງານຕ່າງປະເທດ, ຕໍາແໜ່ງງານ, ສັນຊາດ, ກໍານົດເວລາເຮັດວຽກ ທີ່ຕົນຈະນໍາໃຊ້ແຮງງານດັ່ງກ່າວ | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ປະຕິເສດ ກໍລະນີທີ່ ແຮງງານຕ່າງປະເທດ ຫລື ຫົວໜ່ວຍແຮງງານດັ່ງກ່າວ ບໍ່ປະຕິບັດຕາມ ເງື່ອນໄຂ ຫລື ຂໍ້ກໍານົດ ຫລື ບໍ່ປະຕິບັດຕາມຂັ້ນຕອນທີ່ກໍານົດໄວ້ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | ແຮງງານຕ່າງປະເທດ ທີ່ມາເຮັດວຽກຢູ່ ສປປ ລາວ ມີກໍານົດເວລາເຮັດວຽກ 2 ປີ ແລະ ຕໍ່ໄດ້ອີກ 2 ປີ ແຕ່ສູງສຸດບໍ່ເກີນ 4 ປີ. ຖ້າຮອດກໍານົດເວລາ 4 ປີແລ້ວ ຕ້ອງໄດ້ກັບຄືນປະເທດເດີມ ໂດຍບໍ່ຮັບພິຈາລະນາຕໍ່ບັດອະນຸຍາດເຮັດວຽກຢ່າງເດັດຂາດ ຈົນກວ່າ ຈະເຖິງ 2 ປີ ຈຶ່ງຈະພິຈາລະນາຄືນໃໝ່ໃຫ້. |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |

| ຄ່າທໍານຽມ | | | | |
|---|---|---|---|---|
| ແມ່ນແລ້ວ | 50000.00 | 0.00 | 10000.00 | 60000.00 |
| **ຄໍາເຫັນ** | ອ້າງອີງໃສ່: ໜັງສືແຈ້ງການຫ້ອງການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 0295/ຮສສ.ຫກ, ລົງວັນທີ 15 ກຸມພາ 2012 | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 50000.00 | 0.00 | 10000.00 | 60000.00 |
| **ຄໍາເຫັນ** | ອ້າງອີງໃສ່: ໜັງສືແຈ້ງການຫ້ອງການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 0295/ຮສສ.ຫກ, ລົງວັນທີ 15 ກຸມພາ 2012 | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄໍາເຫັນ** |
| ຂໍ້ຕົກລົງວ່າດ້ວຍ ການອະນຸຍາດນໍາເຂົ້າແຮງງານຕ່າງປະເທດ ທີ່ມາເຮັດວຽກຢູ່ ສປປ ລາວ | 5418/ຮສສ | 10.12.2007 | ໝວດທີ II ເງື່ອນໄຂ ແລະ ລະບຽບການຂໍອະນຸຍາດນໍາເຂົ້າແຮງງານຕ່າງປະເທດ ທີ່ເຮັດວຽກຢູ່ ສປປ ລາວ ມາດຕາ 4, 8, 9, ໝວດທີ III ສິດອະນຸຍາດນໍາເຂົ້າ ແລະ ນໍາໃຊ້ແຮງງານຕ່າງປະເທດ ມາດຕາ 10, ໝວດທີ IV ການຂໍຂຶ້ນທະບຽນ ແລະ ອອກບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດ ມາດຕາ 14, 15, 16 ແລະ ມາດຕາ 17 ໝວດທີ V ການຄຸ້ມຄອງນໍາໃຊ້ແຮງງານຕ່າງປະເທດ ມາດຕາ 18 |
| ກົດໝາຍວ່າດ້ວຍ ແຮງງານ (ສະບັບປັບປຸງ) | 43/ສພຊ | 24.12.2013 | ພາກທີ III ການສົ່ງເສີມການຈັດຫາງານ ໝວດທີ 5 ການນໍາເຂົ້າແຮງງານຕ່າງປະເທດ (ມາດຕາ 41 ຫາມາດຕາ 45) |

## ລາຍລະອຽດຂໍ້ມູນ ສໍາລັບ ໃບອະນຸຍາດ
## ໂຄງການທົບທວນ ແລະ ປັບປຸງລະບຽບການທີ່ຕິດພັນກັບ ການສ້າງຕັ້ງທຸລະກິດ ໃນ ສປປ ລາວ

| ເອກະສານປະກອບ |
| --- |
| **ຊື່ເອກະສານ** |
| ໂກຕ້ານໍາເຂົ້າແຮງງານຕ່າງປະທດ |
| ແຜນປະກອບພະນັກງານ, ລາຍຊື່ພະນັກງານ |
| ຮູບ |
| ສໍາເນົາພາດສະປອດ / ໜັງສືຜ່ານແດນ |
| ໃບຢັ້ງຢືນສຸຂະພາບ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
| --- | --- | --- |
| **ປີ** | **ອອກໃໝ່** | **ຕໍ່ອາຍຸ** |
| 2016 | 22116 | 0 |